ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

# ເອກະສານລາຍງານການເງິນກາງປີ (ທົບທວນຄືນ)

## ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022



www.pwc.com/la

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

**ເອກະສານລາຍງານການເງິນກາງປີ (ທົບທວນຄືນ)**
**ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022**

**ສາລະບານ** | **ໜ້າ**


| | |
|---|---|
| ບົດລາຍງານຂອງຜູ້ກວດສອບ | 1 |
| ໃບລາຍງານຜົນໄດ້ຮັບ | 2 |
| ໃບລາຍງານຜົນໄດ້ຮັບສັງລວມ | 3 |
| ໃບລາຍງານຖານະການເງິນ | 4 |
| ໃບລາຍງານສ່ວນປ່ຽນແປງທຶນ | 5 |
| ໃບລາຍງານກະແສເງິນສົດ | 6 - 7 |
| ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນກາງປີ ໂດຍຫຍໍ້ | 8 - 22 |

pwc

**ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ**

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາບໍລິຫານ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ພວກຂ້າພະເຈົ້າໄດ້ດໍາເນີນການທົບທວນຄືນ ເອກະສານລາຍງານການເງິນກາງປີ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ). ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສິ້ນສຸດວັນທີ 30 ມິຖຸນາ 2022, ໃບລາຍງານຜົນການດໍາເນີນງານ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ ໂດຍຫຍໍ້. ຜູ້ອໍານວຍການ ມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງຖືກອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ຂໍ້ທີ 3 ຂອງເອກະສານລາຍງານການເງິນກາງປີສະບັບນີ້. ສ່ວນພວກເຮົາແມ່ນຮັບຜິດຊອບ ໃນການສະຫຼຸບກ່ຽວກັບເອກະສານລາຍງານການເງິນກາງປີ ດັ່ງກ່າວບົນພື້ນຖານການທົບທວນຄືນຂອງພວກເຮົາ.

**ຂອບເຂດການທົບທວນຄືນ**

ພວກເຮົາໄດ້ດໍາເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານການທົບທວນຄືນແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດໍາເນີນການວິເຄາະປຽບທຽບຂໍ້ມູນທີ່ກ່ຽວຂ້ອງ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດຈໍາກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບຕໍ່ສິ່ງທີ່ເປັນສາລະສໍາຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້. ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມເຫັນ.

**ການສະຫຼຸບ**

ບົນພື້ນຖານການທົບທວນຄືນຂອງພວກເຮົາ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີຂອງທະນາຄານ, ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືວ່າມີຄວາມສໍາຄັນຫຼາຍຕາມນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນ ຂໍ້ທີ 3 ຂອງເອກະສານລາຍງານການເງິນກາງປີສະບັບນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ

ການ ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ Pricewaterhouse Coopers (Lao) Sole Company Limited ນະຄອນຫຼວງວຽງຈັນ

ໂດຍ: ທ່ານ ອະພິສິດ ທ່ຽງຕົງພິມໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

## ໃບລາຍງານຜົນໄດ້ຮັບ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022

| | ບົດ ອະທິບາຍ | ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ | ທົບທວນຄືນ 30 ມິຖຸນາ 2021 ລ້ານກີບ |
|---|---|---|---|
| ລາຍຮັບດອກເບ້ຍ | | 1.437.822 | 1.296.539 |
| ລາຍຈ່າຍດອກເບ້ຍ | | (872.086) | (724.550) |
| **ລາຍຮັບດອກເບ້ຍສຸດທິ** | 4 | **565.736** | **571.989** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | 223.075 | 138.903 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (106.203) | (16.455) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ** | 5 | **116.872** | **122.448** |
| ກຳໄລ/(ຂາດທຶນ) ສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ | | (138.270) | 17.274 |
| ຂາດທຶນສຸດທິ ຈາກການຊື້-ຂາຍອະນຸພັນ | | - | (91) |
| ລາຍຮັບອື່ນໆຈາກການດຳເນີນງານ | | 120.206 | 58.426 |
| **ລວມລາຍຮັບຈາກການດຳເນີນງານ** | | **664.544** | **770.046** |
| ລາຍຈ່າຍສຳລັບການສູນເສຍເງິນກູ້ສຳລັບເງິນກູ້ຢືມໃຫ້ແກ່ລູກຄ້າ | | (392.577) | (394.336) |
| ຂາດທຶນຄ່າເສື່ອມ ສຳລັບຊັບສິນທາງການເງິນ | | (1.918) | (4.602) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **270.049** | **371.108** |
| ລາຍຈ່າຍພະນັກງານ | | (151.953) | (170.926) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (48.389) | (40.541) |
| ຄ່າຫຼຸ້ຍຫ້ຽນສຳລັບສິດໃນການນຳໃຊ້ຊັບສິນ | | (3.996) | (4.188) |
| ລາຍຈ່າຍອື່ນໆຈາກການດຳເນີນງານ | 6 | (86.585) | (88.751) |
| **ລວມລາຍຈ່າຍຈາກການດຳເນີນງານ** | | **(290.923)** | **(304.406)** |
| ກຳໄລຂອງວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 12 | 18.106 | 12.875 |
| **ກຳໄລ/(ຂາດທຶນ)ກ່ອນເສຍອາກອນ** | | **(2.768)** | **79.577** |
| ລາຍຈ່າຍອາກອນກຳໄລ | 18 | (9.930) | (42.277) |
| **ກຳໄລ/(ຂາດທຶນ)ສຸດທິສຳລັບໄລຍະ** | | **(12.698)** | **37.300** |
| ກຳໄລ/(ຂາດທຶນ) (ກີບ) | 7 | (61) | 180 |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ພູແສງທອງ ອານຸລັກຄຳ | ທ່ານ ສົມປະສົງ ໂພທິສານ | ທ່ານ ສາຍສົດ ສົມມະວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການ |

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

## ໃບລາຍງານຜົນໄດ້ຮັບສັງລວມ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| **ກຳໄລ/(ຂາດທຶນ)ສຸດທິສຳລັບໄລຍະ** | **(12.698)** | **37.300** |
| **ລາຍຮັບສັງລວມອື່ນໆ** | | |
| ການສູນເສຍການປະເມີນຄືນຜົນປະໂຫຍດທີ່ກຳນົດໄວ້ | (346) | (2.630) |
| **ລາຍຮັບ (ລາຍຈ່າຍ) ສັງລວມອື່ນໆສຳລັບໄລຍະ, ຫັກອາກອນ** | **(346)** | **(2.630)** |
| **ລວມລາຍຮັບ (ລາຍຈ່າຍ) ສັງລວມສຳລັບໄລຍະ** | **(13.044)** | **34.670** |

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

## ໃບລາຍງານຖານະການເງິນ
## ໃນວັນທີ 30 ມິຖຸນາ 2022

| | ບົດ ອະທິບາຍ | ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ | ກວດສອບ 31 ທັນວາ 2021 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | | 24.006.082 | 19.022.276 |
| ເງິນຝາກຢູ່ທະນາຄານອື່ນ | 8 | 11.363.085 | 9.182.845 |
| ເງິນກູ້ໃຫ້ຢືມແກ່ລູກຄ້າ | 9 | 41.676.348 | 32.372.070 |
| ການລົງທຶນໃນຫຼັກຊັບ - ປະເພດມີໄວ້ເພື່ອຂາຍ | 10 | 88.205 | 91.657 |
| ການລົງທຶນໃນຫຼັກຊັບ - ປະເພດຖືໄວ້ຈົນຄົບກຳນົດ | 11 | 5.088.418 | 5.273.352 |
| ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໂດຍການນຳໃຊ້ວິທີທຶນສ່ວນໄດ້ເສຍ - ສຸດທິ | 12 | 665.097 | 643.318 |
| ຊັບສົມບັດຄົງທີ່ ແລະ ອຸປະກອນ | 13 | 559.304 | 563.503 |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 14 | 287.545 | 293.321 |
| ສິດໃນການນຳໃຊ້ຊັບສິນ | | 52.706 | 55.713 |
| ອາກອນຊັບສິນເຍື່ອນຊຳລະ | | 37.015 | 37.015 |
| ອາກອນກຳໄລຈ່າຍລ່ວງໜ້າ | 18 | 15.147 | 24.015 |
| ຊັບສິນອື່ນໆ | | 608.500 | 677.906 |
| **ລວມຊັບສິນ** | | **84.447.452** | **68.236.991** |
| | | | |
| **ໜີ້ສິນ ແລະ ທຶນ** | | | |
| | | | |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ | 15 | 6.612.086 | 5.269.436 |
| ເງິນຝາກຈາກລູກຄ້າ | 16 | 70.786.474 | 57.169.169 |
| ເງິນກູ້ຢືມຈາກທະນາຄານອື່ນ | 17 | 4.616.744 | 3.354.623 |
| ໜີ້ຕ້ອງສົ່ງສັນຍາເຊົ່າ | | 23.205 | 29.595 |
| ໜີ້ສິນອື່ນໆ | | 291.375 | 282.022 |
| **ລວມໜີ້ສິນ** | | **82.329.884** | **66.104.845** |
| | | | |
| **ທຶນ** | | | |
| ທຶນຈົດທະບຽນ | 19 | 1.038.617 | 1.038.617 |
| ຄັງສະສົມຕາມລະບຽບການ | 20 | 836.635 | 831.667 |
| ການປະເມີນຄືນເງິນສຳຮອງຜົນປະໂຫຍດພະນັກງານຫຼັງອອກການ | | 9.536 | 11.416 |
| ກຳໄລສະສົມ | | 232.780 | 250.446 |
| **ລວມທຶນ** | | **2.117.568** | **2.132.146** |
| **ລວມໜີ້ສິນ ແລະ ທຶນ** | | **84.447.452** | **68.236.991** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ພູແສງທອງ ອານຸລັກຄຳ | ທ່ານ ສົມປະສົງ ໂພທິສານ | ທ່ານ ສົມຈິດ ສົມມະວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການ |

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

## ໃບລາຍງານສ່ວນປ່ຽນແປງທຶນ
## ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022

| | ທຶນຈົດທະບຽນ<br>ລ້ານກີບ | ຄັງສະສົມຕາມລະບຽບການ<br>ລ້ານກີບ | ລາຍການສັງລວມອື່ນໆ: ການປະເມີນຄືນເງິນສໍາຮອງຜົນປະໂຫຍດພະນັກງານຫຼັງອອກການ<br>ລ້ານກີບ | ລາຍການສັງລວມອື່ນໆ: ສໍາຮອງທີ່ມີໄວ້ເພື່ອຂາຍ<br>ລ້ານກີບ | ກໍາໄລສະສົມ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|---|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2022 - ກວດສອບ** | **1.038.617** | **831.667** | **9.882** | **1.534** | **250.446** | **2.132.146** |
| ກໍາໄລສຸດທິພາຍໃນໄລຍະ | - | - | - | - | (12.698) | (12.698) |
| ແບ່ງສ່ວນເຂົ້າຄັງສະສົມສໍາລັບປີ 2021 (ບົດອະທິບາຍຊ້ອນທ້າຍ 20) | - | 4.968 | - | - | (4.968) | - |
| ການປະເມີນຄືນມູນຄ່າຍຸດຕິທໍາຂອງເງິນລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | - | - | - | (1.534) | - | (1.534) |
| ການປະເມີນຄືນເງິນສໍາຮອງຜົນປະໂຫຍດພະນັກງານຫຼັງອອກການ | - | - | (346) | - | - | (346) |
| **ຍອດເຫຼືອໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **1.038.617** | **836.635** | **9.536** | **-** | **232.780** | **2.117.568** |
| **ຍອດເຫຼືອໃນວັນທີ 1 ມັງກອນ 2021 - ກວດສອບ** | **1.038.617** | **753.399** | **(12.616)** | **-** | **433.629** | **2.213.029** |
| ເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສໍາລັບປີ 2020 | - | - | - | - | (116.325) | (116.325) |
| ກໍາໄລສຸດທິພາຍໃນໄລຍະ | - | - | - | - | 37.300 | 37.300 |
| ແບ່ງສ່ວນເຂົ້າຄັງສະສົມສໍາລັບປີ 2020 | - | 78.266 | - | - | (78.266) | - |
| ການປະເມີນຄືນເງິນສໍາຮອງຜົນປະໂຫຍດພະນັກງານຫຼັງອອກການ | - | - | (2.630) | - | - | (2.630) |
| **ຍອດເຫຼືອໃນວັນທີ 30 ມິຖຸນາ 2021 - - ທົບທວນຄືນ** | **1.038.617** | **831.665** | **(15.246)** | **-** | **276.338** | **2.131.374** |

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄໍາ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສີມມະວົງ
ຮອງຜູ້ອໍານວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

## ໃບລາຍງານກະແສເງິນສົດ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022

| | ບົດ ອະທິບາຍ | ຫົກເດືອນ 30 ມິຖຸນາ 2022 ລ້ານກີບ | ຫົກເດືອນ 30 ມິຖຸນາ 2021 ລ້ານກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ** | | | |
| ກຳໄລ/(ຂາດທຶນ)ສຸດທິກ່ອນຫັກອາກອນ | | (2.768) | 79.577 |
| ປັບປຸງ: | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 48.389 | 40.541 |
| ຄ່າຫຼຸ້ຍຫ້ຽນຂອງສິດນຳໃຊ້ຊັບສິນ | | 3.996 | 4.188 |
| ລາຍຈ່າຍສຳລັບການຂາດທຶນຈາກຄ່າເສື່ອມ | 9 | 392.577 | 394.336 |
| ຂາດທຶນຄ່າເສື່ອມສຳລັບການລົງທຶນໃນຫຼັກຊັບ - ປະເພດມີໄວ້ເພື່ອຂາຍ | | 1.918 | 4.602 |
| ກຳໄລ ຂອງວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 12 | (18.106) | (12.875) |
| ຄ່າໃຊ້ຈ່າຍຜົນປະໂຫຍດຫຼັງອອກວຽກທີ່ກຳນົດໄວ້ | | 3.010 | 2.399 |
| ກຳໄລ/(ຂາດທຶນ)ຈາກການຂາຍ ແລະ ສະສາງ | | (1.645) | 4.683 |
| ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ | | 1.303.466 | 47.727 |
| ລາຍຮັບດອກເບ້ຍ | 4 | (1.437.822) | (1.296.539) |
| ລາຍຈ່າຍດອກເບ້ຍ | 4 | 872.086 | 724.550 |
| ລາຍຮັບເງິນປັນຜົນ | | (1.918) | (3.835) |
| **ກະແສເງິນສົດກ່ອນການປ່ຽນແປງຂອງທຶນໝູນວຽນ** | | **1.163.183** | **(10.646)** |
| ການປ່ຽນແປງໃນທຶນໝູນວຽນ: ຫຼຸດລົງ/(ເພີ່ມຂຶ້ນ) | | | |
| ເງິນຝາກໃນທະນາຄານອື່ນ | | (3.639.304) | 890.920 |
| ເງິນກູ້ຢືມໃຫ້ລູກຄ້າ | | (8.691.467) | (927.561) |
| ການລົງທຶນທາງການເງິນ - ຖືໄວ້ຈົນຄົບກຳນົດ | | - | 56.650 |
| ອາກອນກຳໄລລ່ວງໜ້າ | | (1.062) | - |
| ຊັບສິນອື່ນໆ | | 38.897 | 28.999 |
| ໜີ້ຕ້ອງສົ່ງທະນາຄານອື່ນ | | 1.351.647 | 744.367 |
| ໜີ້ຕ້ອງສົ່ງລູກຄ້າ | | 13.491.305 | 4.728.738 |
| ເງິນກູ້ຢືມຈາກທະນາຄານອື່ນ | | 31.651 | (12.479) |
| ໜີ້ສິນອື່ນໆ | | 3.965 | 6.815 |
| ເງິນສົດໄດ້ຮັບ/(ໃຊ້ໃນ) ການດຳເນີນງານ | | | |
| ດອກເບ້ຍຮັບ | | 33.960 | 588.997 |
| ດອກເບ້ຍຈ່າຍ | | (605.533) | (614.323) |
| ລາຍຈ່າຍອາກອນກຳໄລພາຍໃນປີ | 18 | - | (16.717) |
| **ເງິນສົດສຸດທິໄດ້ຮັບໃນກິດຈະກຳການດຳເນີນງານ** | | **3.177.242** | **5.463.760** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສິນບັດຄົງທີ່ ແລະ ອຸປະກອນ | | (56.733) | (47.787) |
| ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ | | - | (3.471) |
| ຮັບເງິນຈາກການຂາຍຊັບສິນບັດຄົງທີ່ ແລະ ອຸປະກອນ | | 22.681 | 318 |
| ຊື້ ສິດໃນການນຳໃຊ້ຊັບສິນ | | (1.673) | (1.061) |
| ຮັບເງິນປັນຜົນຈາກເງິນລົງທຶນຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 12 | 2.825 | 1.365 |
| ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບ - ປະເພດມີໄວ້ເພື່ອຂາຍ | | 1.918 | 3.835 |
| ຈ່າຍເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | | (2.040) | (1.360) |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

## ໃບລາຍງານກະແສເງິນສົດ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022

| | ບົດ ອະທິບາຍ | ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ | ທົບທວນຄືນ 30 ມິຖຸນາ 2021 ລ້ານກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ (ຕໍ່)** | | | |
| ຮັບເງິນຈາກການລົງທຶນໃນຫຼັກຊັບ - ປະເພດຖືໄວ້ຈົນຄົບກຳນົດ | 11 | 348.401 | 67.789 |
| **ເງິນສົດສຸດທິໄດ້ຮັບຈາກກິດຈະກຳການລົງທຶນ** | | **315.379** | **19.628** |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | | |
| ຈ່າຍເງິນປັນຜົນ | | - | (116.325) |
| ຈ່າຍໜີ້ຕ້ອງສົ່ງສັນຍາເຊົ່າ | | (2.470) | (2.713) |
| **ເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ** | | **(2.470)** | **(119.038)** |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດເພີ່ມຂຶ້ນສຸດທິ** | | **3.490.151** | **5.364.350** |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນໄລຍະ | | 25.867.759 | 14.396.829 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍໄລຍະ** | 21 | **29.357.910** | **19.761.179** |

**ລາຍການທີ່ບໍ່ແມ່ນເງິນສົດ ຈາກກິດຈະກຳການລົງທຶນ ແລະ ກິດຈະກຳທາງການເງິນ**

| | | | |
|---|---|---|---|
| ການຊຳລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນໃນຫຼັກຊັບ ປະເພດຖືໄວ້ຈົນຄົບກຳນົດ | | 174.134 | 925.502 |
| ການໄດ້ມາຂອງລາຍການການກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດຄົງທີ່ | | 2.032 | 8.188 |
| ເພີ່ມຂຶ້ນສຳລັບລາຍການສິດໃນການນຳໃຊ້ຊັບສິນ | | - | 3.489 |

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໜ້າທີ 8 ຫາ 22 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນ ທະນາຄານ ມະຫາຊົນ ທີ່ຈົດທະບຽນໃນຢູ່ພາຍໃຕ້ທະນາຄານແຫ່ງສປປລາວ (BoL) ແລະ ຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີທີ່ຕັ້ງຈົດທະບຽນດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 30 ມິຖຸນາ 2022, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫລັກ, ເກົ້າສິບຫ້າ (95) ໜ່ວຍບໍລິການ ແລະ ສິບ (10) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ,ມີພະນັກງານ 2.139 ຄົນ (ຍິງ 998 ຄົນ).

ກິດຈະກຳຫລັກຂອງທະນາຄານ ແມ່ນສະໜອງການບໍລິການດ້ານທະນາຄານ ແລະ ການບໍລິການດ້ານອື່ນໆ ປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ຂາຍຫຼຸດລາຄາຂອງຕາສານໜີ້
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ຂໍ້ມູນທາງການເງິນກາງປີ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກ ສະພາບໍລິຫານ ໃນວັນທີ 25 ສິງຫາ 2022.

## 2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

*ການລະບາດຂອງເຊື້ອພະຍາດ COVID-19:*

ການຕິດເຊື້ອໂຄວິດ-19 ໃນປະເທດລາວ, ຈຳນວນຜູ້ຕິດເຊື້ອໄດ້ຫຼຸດລົງຕັ້ງແຕ່ທ້າຍເດືອນເມສາ 2022, ນອກຈາກນັ້ນ, ຕົວເລກຜູ້ເສຍຊີວິດແມ່ນຫຼຸດລົງເມື່ອທຽບໃສ່ປີກ່ອນ. ເຊິ່ງປະເທດລາວໄດ້ເປີດຮັບນັກທ່ອງທ່ຽວເຂົ້າມາປະເທດໃນວັນທີ 9 ພຶດສະພາ 2022. ປະຈຸບັນ ນັກທ່ອງທ່ຽວຕ່າງປະເທດສາມາດເຂົ້າມາທ່ຽວຊົມໄດ້ປົກກະຕິ ແລະຍັງມີບາງເງື່ອນໄຂ ທີ່ກ່ຽວຂ້ອງກັບພະຍາດໂຄວິດ-19 ຍັງຄົງສືບຕໍ່ປະຕິບັດຢູ່.

ທະນາຄານແຫ່ງ ສປປ ລາວໄດ້ປະກາດນະໂຍບາຍເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ -19 ເຊັ່ນວ່າໄດ້ຍົກເວັ້ນການປະຕິບັດຕາມກົດລະບຽບສະບັບເລກທີ: 512/ທຫລ ສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນກຸ່ມຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19.

ແນວທາງຂອງການຮັບມື, ທະນາຄານໄດ້ ສືບຕໍ່ປະຕິບັດນຳໃຊ້ຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການປັບໂຄງສ້າງເງິນກູ້ ແລະ ການຕິດຕາມຢ່າງໃກ້ຊິດກັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ COVID-19 ເຊິ່ງອາດຈະມີຜົນກະທົບຕໍ່ກັບຄັງເງິນກູ້ຂອງທະນະຄານ.

## 3. ພື້ນຖານການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງທະນາຄານດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021. ເອກະສານລາຍງານການເງິນຫຼັກ (ເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ) ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2021.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ

## 4. ລາຍຮັບສຸດທິຈາກດອກເບ້ຍ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| **ລາຍຮັບດອກເບ້ຍ:** | | |
| ເງິນໃຫ້ລູກຄ້າກູ້ຢືມ | 1.193.392 | 1.171.575 |
| ເງິນຝາກກັບທະນາຄານອື່ນ | 86.358 | 26.572 |
| ເງິນລົງທຶນ - ຖືໄວ້ຈົນຄົບກຳນົດ | 158.072 | 98.353 |
| ລາຍຮັບດອກເບ້ຍອື່ນ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ | - | 39 |
| | **1.437.822** | **1.296.539** |
| **ລາຍຈ່າຍດອກເບ້ຍ:** | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | (119.009) | (100.005) |
| ເງິນຝາກຂອງລູກຄ້າ | (753.077) | (624.545) |
| | **(872.086)** | **(724.550)** |
| **ລາຍຮັບສຸດທິຈາກດອກເບ້ຍ** | **565.736** | **571.989** |

## 5. ລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ບໍລິການຊໍາລະສະສາງ | 182.045 | 113.990 |
| ກິດຈະກໍາດ້ານສິນເຊື່ອ | 7.239 | 2.932 |
| ກິດຈະກໍາອື່ນໆ | 33.791 | 21.981 |
| | **223.075** | **138.903** |
| **ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ບໍລິການຊໍາລະສະສາງ | (25.969) | (14.380) |
| ທຸລະກໍາທາງດ້ານການເງິນ | (80.234) | (2.075) |
| | **(106.203)** | **(16.455)** |
| **ລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການສຸດທິ** | **116.872** | **122.448** |

## 6. ລາຍຈ່າຍອື່ນໆຈາກການດໍາເນີນງານ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| ຈ່າຍຄ່າຄຸ້ມຄອງເງິນຝາກໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 30.758 | 22.668 |
| ຄ່າສ້ອມແປງ ແລະ ບໍາລຸງຮັກສາ | 10.082 | 12.511 |
| ເຄື່ອງຂຽນ ແລະ ເຄື່ອງໃຊ້ຫ້ອງການ | 8.639 | 9.885 |
| ໂທລະຄົມມະນາຄົມ | 4.578 | 4.373 |
| ສາທາລະນຸປະໂພກ | 4.268 | 4.343 |
| ຈ່າຍຄ່າປະກັນໄພ | 4.040 | 4.607 |
| ອື່ນໆ | 24.220 | 30.364 |
| | **86.585** | **88.751** |

## 7. ກໍາໄລຕໍ່ຮຸ້ນ

ການຄິດໄລ່ກໍາໄລພື້ນຖານຕໍ່ຮຸ້ນໃນວັນທີ 30 ມິຖຸນາ 2022 ແລະ 2021 ຄິດໄລ່ຕາມກໍາໄລສໍາລັບປີທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ ແລະ ຈໍານວນຮຸ້ນສາມັນສະເລ່ຍທີ່ຄ້າງຈ່າຍລະຫວ່າງປີ ມີດັ່ງລຸ່ມນີ້:

| | ທົບທວນຄືນ<br>30 ມິຖຸນາ 2022 | ທົບທວນຄືນ<br>30 ມິຖຸນາ 2021 |
|---|---|---|
| ກໍາໄລ/(ຂາດທຶນ) ສ່ວນທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ (ລ້ານກີບ) | (12.698) | 37.300 |
| ຈໍານວນສະເລ່ຍຂອງຮຸ້ນສາມັນສໍາລັບລາຍໄດ້ພື້ນຖານຕໍ່ຮຸ້ນ (ຫົວໜ່ວຍ) | 207.723.300 | 207.723.300 |
| ກໍາໄລ/(ຂາດທຶນ) ຕໍ່ຮຸ້ນ (ກີບ) | (61) | 180 |

ຂາດທຶນຈາກການດໍາເນີນງານສໍາລັບໄລຍະສິ້ນສຸດວັນທີ 30 ມິຖຸນາ 2022 ຈໍານວນ 30.804 ລ້ານກີບ ຊຶ່ງຂາດທຶນຕໍ່ຮຸ້ນ 148 ກີບຕໍ່ຮຸ້ນ ແລະ ກໍາໄລຈາກການດໍາເນີນງານສໍາລັບໄລຍະສິ້ນສຸດວັນທີ 30 ມິຖຸນາ 2021 ຈໍານວນ 24.425 ລ້ານກີບ ຊຶ່ງຂາດທຶນຕໍ່ຮຸ້ນ 118 ກີບຕໍ່ຮຸ້ນ.

## 8. ໜີ້ຕ້ອງຮັບຈາກທະນາຄານ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ** | **7.144.623** | **7.707.398** |
| - ເປັນເງິນກີບ | 9.368 | 181.421 |
| - ເປັນເງິນຕາຕ່າງປະເທດ | 7.135.255 | 7.525.977 |
| **ເງິນຝາກມີກໍານົດ** | **4.169.870** | **1.468.772** |
| - ເປັນເງິນກີບ | 2.375.000 | 747.890 |
| - ເປັນເງິນຕາຕ່າງປະເທດ | 1.794.870 | 720.882 |
| **ດອກເບ້ຍຄ້າງຮັບ** | **48.592** | **6.675** |
| | **11.363.085** | **9.182.845** |

ອັດຕາດອກເບ້ຍສໍາລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີ ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2022<br>% ຕໍ່ປີ | 31 ທັນວາ 2021<br>% ຕໍ່ປີ |
|---|---|---|
| ເງິນຝາກກະແສລາຍວັນ | 0,07% - 1,20% | 0,07% - 1,10% |
| ເງິນຝາກປະຢັດ | 0,07% - 2,16% | 0,07% - 2,16% |
| ເງິນຝາກມີກໍານົດ | 0,15% - 6,36% | 0,15% – 6,36% |

## 9. ເງິນກູ້ໃຫ້ແກ່ລູກຄ້າ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າ | 38.471.852 | 30.080.974 |
| ຫັກ: ເງິນແຮສໍາລັບການຂາດທຶນຈາກການເສື່ອມຄ່າ | (2.061.416) | (1.457.635) |
| ດອກເບ້ຍຄ້າງຮັບ | 5.265.912 | 3.748.731 |
| | **41.676.348** | **32.372.070** |

ການປ່ຽນແປງໃນເງິນແຮສໍາລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ລູກຄ້າລະຫວ່າງ 6 ເດືອນສິ້ນສຸດ ວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2022 - ກວດສອບ** | **1.457.635** |
| ການປ່ຽນແປງໃນລະຫວ່າງໄລຍະ | 392.577 |
| ໜີ້ສູນທີ່ສະສາງອອກພາຍໃນໄລຍະ | (20.094) |
| ສ່ວນຕ່າງຈາກອັດຕາປ່ຽນ | 231.298 |
| **ຍອດເຫຼືອໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **2.061.416** |

ລາຍລະອຽດເງິນແຮສໍາລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ລູກຄ້າໃນວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

| | ທົບທວນຄືນ<br>30 ມິຖຸນາ 2022 | | ກວດສອບ<br>31 ທັນວາ 2021 | |
|---|---|---|---|---|
| | ຍອດເຫຼືອທ້າຍ<br>ລ້ານກີບ | ຄ່າເສື່ອມ<br>ລ້ານກີບ | ຍອດເຫຼືອທ້າຍ<br>ລ້ານກີບ | ຄ່າເສື່ອມ<br>ລ້ານກີບ |
| ຄ່າເສື່ອມຈາກການປະເມີນເງິນກູ້ແບບລາຍບຸກຄົນ | 4.859.896 | 1.688.833 | 5.888.337 | 1.109.137 |
| ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ | 33.611.956 | 372.583 | 24.192.637 | 348.498 |
| | **38.471.852** | **2.061.416** | **30.080.974** | **1.457.635** |

ອັດຕາດອກເບ້ຍສໍາລັບເງິນກູ້ພາຍໃນໄລຍະຫົກເດືອນ ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2022<br>% ຕໍ່ປີ | 31 ທັນວາ 2021<br>% ຕໍ່ປີ |
|---|---|---|
| ເງິນກູ້ເປັນສະກຸນເງິນກີບ | 5,50% - 16,00% | 5,50% - 16,00% |
| ເງິນກູ້ເປັນສະກຸນເງິນໂດລາ | 4,25% - 16,00% | 4,25% - 16,00% |
| ເງິນກູ້ເປັນສະກຸນເງິນບາດ | 6,00% - 10,00% | 6,00% - 10,00% |

## 9. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

*ວິເຄາະເງິນກູ້ຕາມສະກຸນເງິນ:*

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| ເງິນກູ້ເປັນສະກຸນເງິນກີບ | 13.966.384 | 10.920.255 |
| ເງິນກູ້ເປັນສະກຸນເງິນໂດລາ | 19.707.019 | 15.408.832 |
| ເງິນກູ້ເປັນສະກຸນເງິນບາດ | 4.798.449 | 3.751.887 |
| | **38.471.852** | **30.080.974** |

*ວິເຄາະເງິນກູ້ຕາມມື້ຄົບກໍານົດເດີມຂອງເງິນກູ້:*

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 3.471.435 | 2.714.300 |
| ເງິນກູ້ໄລຍະກາງ | 22.041.746 | 17.234.346 |
| ເງິນກູ້ໄລຍະຍາວ | 12.958.671 | 10.132.328 |
| | **38.471.852** | **30.080.974** |

## 10. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ໃນວັນທີ 30 ມິຖຸນາ 2022, ຮຸ້ນດັ່ງກ່າວມີມູນຄ່າ 88.205 ລ້ານກີບ (31 ທັນວາ 2021: 91.657 ລ້ານກີບ) ແລະ ມີການບັນທຶກຄ່າເສື່ອມມູນຄ່າແລ້ວເປັນຈໍານວນ 92.999 ລ້ານກີບ.

## 11. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກໍານົດ

ການປ່ຽນແປງທີ່ມີສາລະສໍາຄັນ ຂອງການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກໍານົດ ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **5.273.352** |
| ເພີ່ມຂຶ້ນ | 174.134 |
| ວິທີຫຼຸດຕົ້ນທຶນທີ່ເກີດຂຶ້ນໃນໄລຍະ | (10.667) |
| ໄດ້ຮັບ | (348.401) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **5.088.418** |

## 12. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ດັ່ງລຸ່ມນີ້:

| | ລ້ານກີບ |
|---|---:|
| **ຍອດເຫຼືອໃນວັນທີ 1 ມັງກອນ 2022 - ກວດສອບ** | **643.318** |
| ສ່ວນແບ່ງກຳໄລວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 18.106 |
| ເງິນລົງທຶນເພີ່ມໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 6.498 |
| ຫັກ: ເງິນປັນຜົນທີ່ໄດ້ຮັບໃນໄລຍະ | (2.825) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **665.097** |

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໃນວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

| | **ອັດຕາສ່ວນເງິນລົງທຶນ** | | **ມູນຄ່າຕົ້ນທຶນ** | | **ມູນຄ່າສຸດທິ** | |
|---|---:|---:|---:|---:|---:|---:|
| | | | **ທົບທວນຄືນ** | **ກວດສອບ** | **ທົບທວນຄືນ** | **ກວດສອບ** |
| | **30 ມິຖຸນາ 2022** | **31 ທັນວາ 2021** | **30 ມິຖຸນາ 2022** | **31 ທັນວາ 2021** | **30 ມິຖຸນາ 2022** | **31 ທັນວາ 2021** |
| | *(%)* | | **ລ້ານກີບ** | | | |
| ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ | 70,00% | 70,00% | 70.000 | 70.000 | 74.647 | 74.920 |
| ທະນາຄານຮ່ວມທຸລະກິດລາວ-ຫວຽດ | 25,00% | 25,00% | 197.839 | 197.839 | 257.481 | 252.650 |
| ທະນາຄານ ລາວ-ຝຣັ່ງ ຈຳກັດ | 30,00% | 30,00% | 126.000 | 126.000 | 127.974 | 128.048 |
| ທະນາຄານ ລາວ-ຈີນ ຈຳກັດ * | 39,87% | 49,00% | 151.458 | 147.000 | 180.938 | 168.675 |
| ບໍລິສັດ ປະກັນໄພລາວ-ຫວຽດ | 35,00% | 35,00% | 9.168 | 9.168 | 15.768 | 14.282 |
| ບໍລິສັດ ລາວເນີເຊີນບໍ ເພເມັ້ນ ເນັດເວີກ ຈຳກັດ | 20,00% | 20,00% | 6.800 | 4.760 | 8.289 | 4.743 |
| **ລວມ** | | | **561.265** | **554.767** | **665.097** | **643.318** |

* ອີງຕາມໃບອະນຸຍາດດຳເນີນທຸລະກິດເລກທີ 0839/ຈທວ, ລົງວັນທີ 26 ເມສາ 2022 ທະນາຄານ ລາວ-ຈີນ ຈຳກັດ ໄດ້ເພີ່ມທຶນຈົດທະບຽນຈາກ 1.000 ຮຸ້ນເປັນ 1.229 ຮຸ້ນ, ເຖິງຢ່າງໃດກໍຕາມ, ທຄຕລ ຕົກລົງທີ່ຈະບຳລຸງຮັກສາຮຸ້ນຂອງພວກເຂົາໃຫ້ເປັນຄືເກົ່າ (490 ຮຸ້ນ) ໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມສຳລັບການເພີ່ມຈຳນວນຮຸ້ນໃນຄັ້ງນີ້. ຜູ້ຖືຮຸ້ນອື່ນ "Fudian Bank Co., Ltd" ເປັນພຽງຜູ້ຖືຮຸ້ນລາຍດຽວທີ່ອັດສິດເງິນສົດເພື່ອເພີ່ມ 229 ຮຸ້ນ ຈຳນວນ 79.888 ລ້ານກີບ ຊຶ່ງສົ່ງຜົນຕໍ່ສັດສ່ວນການຖືຮຸ້ນຂອງ ທຄຕລ ຫຼຸດລົງຈາກ 49,00% ເປັນ 39,87%.

## 13. ຊັບສົມບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສົມບັດ ແລະ ອຸປະກອນສຳລັບໄລຍະ ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---:|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **563.503** |
| ເພີ່ມຂຶ້ນ* | 58.766 |
| ໂອນຊັບສົມບັດພວມຊື້ພວມກໍ່ສ້າງເປັນຊັບສິນຄົງທີ່ບໍ່ມີຕົວຕົນ (ບົດອະທິບາຍ ຂໍ້ 14) | (240) |
| ຂາຍ/ສະສາງ, ສຸດທິ | (20.352) |
| ຄ່າຫຼຸ້ຍຫ້ຽນ | (42.373) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທີ່ບໍ່ທວນຄືນ** | **559.304** |

*ໃນປີນີ້, ການເພີ່ມຂຶ້ນຂອງຊັບສົມບັດ ແລະ ອຸປະກອນແມ່ນຊັບສົມບັດພວມຊື້ພວມກໍ່ສ້າງຂອງອາຄານ.

## 14. ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນສຳລັບໄລຍະ ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---:|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **293.321** |
| ເພີ່ມຂຶ້ນ | - |
| ໂອນມາຈາກຊັບສົມບັດພວມຊື້ພວມກໍ່ສ້າງ (ບົດອະທິບາຍ ຂໍ້ 13) | (240) |
| ຄ່າຫຼຸ້ຍຫ້ຽນ | (6.016) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທີ່ບໍ່ທວນຄືນ** | **287.545** |

.

## 15. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **5.595.612** | **4.239.624** |
| - ເປັນເງິນກີບ | 2.790.647 | 1.691.702 |
| - ເປັນເງິນຕາຕ່າງປະເທດ | 2.804.965 | 2.547.922 |
| **ເງິນຝາກປະຢັດ** | **179.357** | **222.603** |
| - ເປັນເງິນກີບ | 71.891 | 113.520 |
| - ເປັນເງິນຕາຕ່າງປະເທດ | 107.466 | 109.083 |
| **ເງິນຝາກມີກຳນົດ** | **796.613** | **764.652** |
| - ເປັນເງິນກີບ | 258.870 | 261.870 |
| - ເປັນເງິນຕາຕ່າງປະເທດ | 537.743 | 502.782 |
| **ອື່ນໆ** | **27.595** | **20.652** |
| - ເປັນເງິນກີບ | 20.157 | 19.912 |
| - ເປັນເງິນຕາຕ່າງປະເທດ | 7.438 | 740 |
| **ດອກເບ້ຍຄ້າງຮັບ** | **12.909** | **21.905** |
| | **6.612.086** | **5.269.436** |

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ ໃນໄລຍະ ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2022<br>*% ຕໍ່ປີ* | 31 ທັນວາ 2021<br>*% ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນ | 0,00% – 1,00% | 0,00% – 0,30% |
| ເງິນຝາກປະຢັດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກມີກຳນົດ | 0,56% – 6,65% | 0,56% – 6,65% |

## 16. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | ທີ່ບໍ່ທອນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **9.698.323** | **7.627.802** |
| ເງິນຝາກກະແສລາຍວັນເປັນເງິນກີບ | 3.717.068 | 3.453.603 |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | 5.981.255 | 4.174.199 |
| **ເງິນຝາກປະຢັດ** | **35.876.649** | **28.428.750** |
| ເງິນຝາກປະຢັດເປັນເງິນກີບ | 15.917.228 | 13.710.668 |
| ເງິນຝາກປະຢັດເປັນເງິນຕາຕ່າງປະເທດ | 19.959.421 | 14.718.082 |
| **ເງິນຝາກມີກຳນົດ** | **24.217.229** | **20.439.404** |
| ເງິນຝາກມີກຳນົດເປັນເງິນກີບ | 9.019.422 | 9.446.282 |
| ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ | 15.197.807 | 10.993.122 |
| **ເງິນຝາກມັດຈຳ** | **129.282** | **79.905** |
| ເງິນຝາກມັດຈຳເປັນເງິນກີບ | 46.457 | 24.830 |
| ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ | 82.825 | 55.075 |
| **ໜີ້ຕ້ອງສົ່ງລູກຄ້າອື່ນໆ** | **241.598** | **95.915** |
| **ດອກເບ້ຍຄ້າງຮັບ** | **623.393** | **497.393** |
| | **70.786.474** | **57.169.169** |

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 1,25% – 1,89%, 0,90% - 1,15% and 0,45% – 0,70% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ, ບາດ ມີກຳນົດຕັ້ງແຕ່ 3, 6, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3,16% – 12,15%, 1,65% - 7,75 % ແລະ 1,10% – 7,75% ຕໍ່ປີ ຕາມລຳດັບ.

## 17. ເງິນກູ້ຢືມຈາກທະນາຄານອື່ນ

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວໃນວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **3.161.581** |
| ເພີ່ມຂຶ້ນ | 91.667 |
| ຈ່າຍຄືນ | (60.016) |
| ຂາດທຶນຈາກອັດຕາແລກປ່ຽນ | 1.080.546 |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **4.273.778** |

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| ເງິນກູ້ຢືມຈາກ ທຫລ | 3.048.310 | 2.251.071 |
| ເງິນກູ້ຢືມຈາກທະນາຄານອື່ນ | 1.225.468 | 910.510 |
| **ລວມ** | **4.273.778** | **3.161.581** |
| **ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ** | 342.966 | 193.042 |
| | **4.616.744** | **3.354.623** |

## 18. ອາກອນກຳໄລຈ່າຍລ່ວງໜ້າ

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ກວດສອບ<br>31 ທັນວາ 2021<br>ລ້ານກີບ |
|---|---|---|
| ອາກອນກຳໄລຈ່າຍລ່ວງໜ້າ (1) | 15.147 | 24.015 |

(1) ການເຄື່ອນໄຫວອາກອນກຳໄລຈ່າຍລ່ວງໜ້າສຳລັບປີມີດັ່ງນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **24.015** |
| ອາກອນກຳໄລໃນໄລຍະ (2) | (9.930) |
| ປັບປຸງອາກອນລຳສັບປີທີ່ຜ່ານມາໂດຍອີງໃສ່ການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ | 1.062 |
| ຈ່າຍໃນໄລຍະ | - |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **15.147** |

## 18. ອາກອນກໍາໄລຈ່າຍລ່ວງໜ້າ(ຕໍ່)

(2) ລາຍຈ່າຍອາກອນກໍາໄລສໍາລັບຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022 ແລະ 30 ມິຖຸນາ 2021 ມີດັ່ງນີ້:

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| ອາກອນກໍາໄລໃນໄລຍະ | 9.930 | 42.277 |

## 19. ທຶນຈົດທະບຽນ

ທຶນຈົດທະບຽນບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້.

## 20. ຄັງສະສົມຕາມລະບຽບການ

| | ຄັງສະສົມຕາມ<br>ລະບຽບການ<br>ລ້ານກີບ | ຄັງຂະຫຍາຍ<br>ທຸລະກິດ ແລະ ສໍາ<br>ຮອງອື່ນໆ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ** | **228.135** | **603.532** | **831.667** |
| ແບ່ງສ່ວນເຂົ້າຄັງສະສົມສໍາລັບປີ 2021 | 496 | 4.472 | 4.968 |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ** | **228.631** | **608.004** | **836.635** |

## 21. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດ ໂດຍສະແດງມູນຄ່າໃນໃບລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

| | ທົບທວນຄືນ<br>30 ມິຖຸນາ 2022<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ | 3.241.253 | 2.757.422 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 18.116.874 | 12.108.670 |
| ເງິນຝາກກະແສລາຍວັນ ແລະຝາກປະຢັດຢູ່ທະນາຄານອື່ນ | 7.144.623 | 3.781.459 |
| ເງິນຝາກມີກໍານົດ ພາຍໃນ 90 ວັນ | 855.160 | 1.113.628 |
| | **29.357.910** | **19.761.179** |

## 22. ພາລະຜູກພັນ

| | 30 ມິຖຸນາ 2022 | 31 ທັນວາ 2021 |
|---|---|---|
| | ລ້ານກີບ | ລ້ານກີບ |
| ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii) | 2.547.472 | 1.917.706 |
| ໜັງສືຄໍ້າປະກັນທາງການເງິນ (i) | 479.998 | 375.568 |
| ໜັງສືສິນເຊື່ອກັບທີ່ | 539.164 | 188.917 |
| ໜັງສືສິນເຊື່ອລໍຖ້າຊໍາລະສະສາງ | 230.416 | 313.300 |
| | **3.797.050** | **2.795.491** |

### (i) ໜັງສືຄໍ້າປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄໍ້າປະກັນ ແລະ ໜັງສືສິນເຊື່ອເພື່ອຄໍ້າປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄໍ້າປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄໍ້າປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ).

### (ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສໍາລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສໍາລັບເງິນກູ້ ແລະ ເງິນກູ້ໝູນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກໍານົດທີ່ໄດ້ກໍານົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ,ຂໍ້ຜູກພັນອາດຈະໝົດກໍານົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈໍາເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕໍ່າກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນໍາໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກໍານົດໄວ້. ທະນາຄານຕິດຕາມມື້ຄົບກໍານົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ໂດຍທົ່ວໄປແມ່ນມີລະດັບຄວາມສ່ຽງສິນເຊື່ອຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

## 23. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສໍາຮອງຂັ້ນຕໍ່າຕາມລະບຽບການ ເພື່ອໃຫ້ສອດຄ່ອງຕາມຂໍ້ກໍານົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄໍາແນະນໍາອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າທະນາຄານໄດ້ປະຕິບັດຕາມຂໍ້ກໍານົດທາງການເງິນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານຮັບຮູ້ເຖິງຄວາມຈໍາເປັນຂອງທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກໍາໄລ ແລະ ຄວາມພຽງພໍຂອງທຶນ.

**ອີງຕາມຂໍ້ກໍານົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:**

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກໍາໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າທີ່ຕໍ່າກວ່າ 1,25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ ຫຼືຍອດເຫຼືອຂອງເງິນແຮທົ່ວໄປ ແລະເງິນແຮສໍາລັບຄວາມສ່ຽງ ແລະ ລາຍຈ່າຍເງິນແຮພາຍໃນໄລຍະຫົກເດືອນ.

ຂອບເຂດຕ່າງໆ ແມ່ນຖືກນໍາໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່ ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສໍາຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

**ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນກາງປີ ດັ່ງຕໍ່ໄປນີ້:**

| | **30 ມິຖຸນາ 2022**<br>**ລ້ານກີບ** | **31 ທັນວາ 2021**<br>**ລ້ານກີບ** |
|---|---|---|
| ທຶນຊັ້ນ 1 | 2.117.567 | 2.132.146 |
| ທຶນຊັ້ນ 2 | - | - |
| **ລວມທຶນ** | **2.117.567** | **2.132.146** |
| ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ) | (665.097) | (643.318) |
| **ທຶນສໍາລັບການຄິດໄລ່ CAR (A)** | **1.452.470** | **1.488.828** |
| ຄວາມສ່ຽງສໍາຄັນຢູ່ໃບລາຍງານຖານະການເງິນ | 23.088.229 | 18.738.102 |
| ຄວາມສ່ຽງສໍາຄັນຢູ່ລາຍການນອກໃບລາຍງານຖານະການເງິນ | 2.031.629 | 1.467.354 |
| **ລວມຄວາມສ່ຽງສໍາຄັນຢູ່ຊັບສິນ (B)** | **25.119.858** | **20.205.456** |
| **ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)** | **5,78%** | **7,37%** |

## 24. ການເປີດເຜີຍຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງ

ກ) ຜູ້ຖືຮຸ້ນໃຫຍ່ຂອງທະນາຄານ ແມ່ນ ລັດຖະບານລາວ ຖືຮຸ້ນ 60% ຂອງຮຸ້ນທັງໝົດຂອງທະນາຄານ. ຮຸ້ນສ່ວນທີ່ເຫຼືອຂອງທະນາຄານ ແມ່ນຖືໂດຍນັກລົງທຶນທົ່ວໄປ.

ຂໍ້ມູນຂອງທະນາຄານ ໃນສ່ວນຂອງເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນ ໄດ້ເປີດເຜີຍ ຢູ່ບົດອະທິບາຍຂໍ້ທີ 12.

ຂ) ລາຍການເຄື່ອນໄຫວທີ່ສໍາຄັນ ກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 30 ມິຖຸນາ 2022 ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2022<br>ລ້ານກີບ | 30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| **ລາຍຮັບດອກເບ້ຍ ແລະ ອື່ນໆ** | | |
| ບໍລິສັດແມ່ | 167.604 | 126.666 |
| **ລາຍຈ່າຍດອກເບ້ຍ ແລະ ອື່ນໆ** | | |
| ພາກສ່ວນທີ່ກ່ຽວຂ້ອງ | 66.619 | 51.086 |

ລາຍການທີ່ເກີດຂຶ້ນຂອງຜູ້ບໍລິຫານລະດັບສູງຂອງທະນາຄານ

ຄ) ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອໍານວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

| | 30 ມິຖຸນາ 2022<br>ລ້ານກີບ | 30 ມິຖຸນາ 2021<br>ລ້ານກີບ |
|---|---|---|
| ເງິນເດືອນ | 833 | 708 |
| ເງິນອຸດໜູນຕໍາແໜ່ງ | 534 | 453 |
| ເງິນບໍານັດ | - | *295* |
| | **1.367** | **1.456** |

ງ) ຍອດຄົງເຫຼືອທີ່ເກີດຈາກ ລາຍຮັບດອກເບ້ຍ. ລາຍຈ່າຍດອກເບ້ຍ ແລະ ອື່ນໆ

ຍອດຄົງເຫຼືອ ໃນໄລຍະລາຍງານ ຂອງລາຍການຂອງພາກສ່ວນທີ່ກ່ຽວຂ້ອງ ມີດັ່ງຕໍ່ໄປນີ້:

| | 30 ມິຖຸນາ 2022<br>ລ້ານກີບ | 31 ທັນວາ 2021<br>ລ້ານກີບ |
|---|---|---|
| **ໜີ້ຕ້ອງຮັບ** | | |
| ບໍລິສັດແມ່ | 5.182.546 | 5.507.249 |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 1.020.901 | 837.737 |
| ພາກສ່ວນທີ່ກ່ຽວຂ້ອງ | 20.753.878 | 16.139.348 |
| **ໜີ້ຕ້ອງສົ່ງ** | | |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 1.695.367 | 362.550 |
| ພາກສ່ວນທີ່ກ່ຽວຂ້ອງ | 3.376.742 | 2.251.071 |